# ການປູກເຫັດບົດ

**ບົດນຳ**

ເຫັດ ມີຄຸນຄ່າທາງດ້ານອາຫານສູງ ມີລົດຊາດແຊບດີ ປະກອບດ້ວຍທາດຕ່າງໆດັ່ງລຸ່ມນີ້ :

ທາດໂປຣຕີນ, ຄາໂບໄຮເດດ, ວິຕາມິນ ແລະ ແຮ່ທາດອື່ນໆ , ໃນສະໄໝບູຮານ ມີຜູ້ໃຊ້ເຫັດປຸງແຕ່ງເປັນຢາປົວ ພະຍາດບາງຊະນິດ

ໃນປະຈຸບັນວິທະຍາການຕ່າງໆ ກ້າວໜ້າຂື້ນ ມະນຸດ ສາມາດນຳເອົາເຫັດມາປູກໄດ້ຫຼາຍຊະນິດເຊັ່ນ : ເຫັດເຟືອງ, ເຫັດນາງລົມ, ເຫັດຫູໜູ, ເຫັດຫອມເນື່ອງຈາກມີວັດຖຸຕ່າງໆ ດັ່ງນັ້ນ ຈິ່ງມີຜູ້ ຫັນມາປະກອບອາຊີບຜະລິດເຫັດຂາຍ ນັບມື້ ຂະຫຍາຍຕົວຂື້ນໄປເລື້ອຍໆຕະຫຼອດຈົນຊາວໄຮ່ນາ ກໍ່ສາມາດປະກອບອາຊີບປູກເຫັດ ຂາຍຕາມທອ້ງຕະຫຼາດ ໄດ້ຫຼາຍຕະຫຼອດປີ ເພາະວ່າການປູກເຫັດບໍ່ໄດ້ລົງທຶນຫຼາຍ ແລະ ບໍ່ໄດ້ໃຊ້ແຮງຫຼາຍ ໂດຍສະເພາະຢ່າງຍິ່ງປະເທດລາວເຮົາ ເປັນປະເທດກະສິກຳ ສາມາດນຳເອົາເຟືອງ , ຂີ້ເລື່ອຍ, ຊິ່ງມີທົ່ວໆໄປ ບໍ່ໄດ້ໃຊ້ພື້ນທີ່ຫຼາຍ ພຽງແຕ່ເຮັດໃຫ້ຖືກວິທີ ກໍ່ຈະປະສົບຜົນສຳເລັດໄດ້ .



## 1. ລັກສະນະເຮືອນເຫັດ

ເຮືອນທີ່ໃຊ້ປູກເຫັດຄວນມີຂະໜາດກວ້າງ 4 ແມັດ, ຍາວ 6 ແມັດ, ສູງ 3 ແມັດ ຫຼັງຄາມຸງດ້ວຍໄຟທ້າຍາ ດ້ານຂ້າງເຮືອນເຫັດຄວນເປັນພລາສຕິກເຄືອບ ສາມາດເປີດ—ປິດໄດ້ສະດວກ

## 2. ການຜະລິດຖົງເຊື້ອເຫັດ

**ມີສູດອາຫານທີ່ໃຊ້ເຮັດກ້ອນເຊື້ອປູກເຫັດດັ່ງນີ້ :**

**ສູດທີ 1**

| | | |
|---|---|---|
| * ຂີ້ເລື່ອຍໄມ້ເນື້ອອ່ອນ | 100 | ກິໂລ |
| * ຮຳລະອຽດ | 75 | ກິໂລ |
| * ປູນຂາວ | 2 | ກິໂລ |
| * ຢິບຊຳ | 500 | ກິໂລ |
| * ດີເກືອ | 200 | ກິໂລ |
| * ຄວາມຊຸ່ມ | 65 — 75 | ເປີເຊັນ |

**ສູດທີ 2**

| | | |
|---|---|---|
| * ຂີ້ເລື່ອຍໄມ້ເນື້ອອ່ອນ | 100 | ກິໂລ |
| * ຮຳລະອຽດ | 3 | ກິໂລ |
| * ນ້ຳຕານຊາຍ | 2 | ກິໂລ |
| * ປູນຂາວ | 1 | ກິໂລ |
| * ຢິບຊຳ | 2 | ກິໂລ |
| * ດີເກືອ | 200 | ກິໂລ |
| * ຄວາມຊຸ່ມ | 65— 75 | ເປີເຊັນ |



ຮູບ: ຖົງເຊື້ອເຫັດ

ນຳຂີ້ເລື່ອຍມາປະສົມກັບອາຫານເສີມຄຸກໃຫ້ເຂົ້າກັນດີ ຕື່ມນ້ຳລົງໄປຈົນກະທັ້ງມີຄວາມຊຸ່ມພໍດີ ຄື : ຂະນະກຳຂີ້ເລື່ອຍໄວ້ໃນມື ຈະບໍ່ມີນ້ຳໄຫຼອອກມາຕາມງ່າມື ເມື່ອແບມືອອກຂີ້ເລື່ອຍຍັງຈັບຕົວກັນເປັນກ້ອນ ຫຼື ແຕກປະມານ 2 ຫາ 3 ກ້ອນ ຈາກນັ້ນນຳສ່ວນປະສົມດັ່ງກ່າວບັນຈຸຖົງພລາສຕິກທົນຮ້ອນ ໃຫ້ແໜ້ນພໍສົມຄວນປະມານຖົງລະ 800 ກຣາມ ພ້ອມໃສ່ຄໍພລາສຕິກ ແລະ ຈຸກດ້ວຍສຳລີ ນຳໄປໜື້ງຂ້າເຊື້ອດ້ວຍອຸນນະພູມ 100 °C ເປັນເວລາ 2 ຊົ່ວໂມງ ແລ້ວນຳໄປໃສ່ເຊື້ອເຂົ້າຝາງຖົງປະມານ 10 — 20 ເມັດຕໍ່ໄປ.

## 3. ການບົ່ມພັກກ້ອນເຊື້ອເຫັດ

ຫຼັງຈາກທີ່ໄດ້ທຳການເຂ່ຍເຊື້ອລົງກ້ອນຖົງເຫັດແລ້ວ ນຳຖົງກ້ອນເຊື້ອ ໄປບົ່ມພັກໄວ້ໃນເຮືອນເຫັດທີ່ມີອຸນນະພູມປະມານ 28—30 ອົງສາ (ອຸນນະພູມຫ້ອງ) ໃຫ້ມີການຖ່າຍເທ, ລະບາຍອາກາດຢ່າງພຽງພໍ ບົ່ມພັກກ້ອນເຊື້ອເຫັດປະມານ 25— 30 ວັນ ເຊື້ອເຫັດຈະຈະເລີນເຕັມຖົງບົ່ມພັກຕໍ່ໄປ

ອີກປະມານ 1—2 ເດືອນ ເພື່ອໃຫ້ເສັ້ນໄຍເດີນໜາແໜ້ນ ແລະ ແຂງແຮງ (ເສັ້ນໄຍຮັດຕົວ) ຈາກນັ້ນຈຶ່ງຂົນຍ້າຍເຂົ້າໂຮງເຮືອນ ສຳລັບເປີດດອກ .



ຮູບ: ການບົ່ມພັກກ້ອນເຊື້ອເຫັດ

## 4. ການຜະລິດດອກເຫັດ

ເມື່ອນຳກ້ອນເຊື້ອເຫັດທີ່ເດີນເຕັມຖົງ ແລະ ແໜ້ນໂຕ ແລ້ວເຂົ້າເຮືອນເຫັດ ເປີດດອກໃຫ້ຈຸກສຳລີອອກ ຫົດນ້ຳໃຫ້ຊຸ່ມ ອຸນນະພູມພາຍໃນເຮືອນຄວນຢູ່ປະມານ 7—10 ວັນ ເຫັດກໍ່ຈະເກີດຕຸ່ມດອກນ້ອຍໆ ບໍລິເວນປາກຖົງ ໃຫ້ເອົາມີດປາດປາກຖົງອອກໃຫ້ໝົດ ພໍດອກເຫັດເລີ້ມໃຫຍ່ໃຫ້ເປີດເຮືອນເຫັດໂດຍການມ້ວນພລາສຕິກດ້ານຂ້າງຂື້ນເພື່ອຖ່າຍເທລະບາຍອາກາດ ເຫັດສາມາດເກີດດອກໄດ້ຫຼັງຈາກເສັ້ນໄຍແໜ້ນຕົວແລ້ວ 1—2 ເດືອນ .

## 5. ການເກັບຜົນຜະລິດ

ໃຫ້ເກັບມື້ລະ 2 ຄັ້ງ ຄື: ເຊົ້າ ແລະ ແລງ ໂດຍໃຊ້ມືດຶງດອກເຫັດທີ່ໃຫຍ່ເຕັມທີ່ອອກ ທະຍອຍເກັບເລື້ອຍໆ ຈົນໝົດ

ຈາກນັ້ນຈຶ່ງປ່ອຍປະໄວ້ ໂດຍບໍ່ຕ້ອງຫົດນ້ຳ 7—10 ວັນ ແລ້ວຄ່ອຍໆຫົດນ້ຳ ແລະ ຄວບຄຸມອຸນນະພູມໃຫ້ຢູ່ປະມານ 37—40 ອົງສາເຊ ຈົນເຫັດເກີດຕຸ່ມດອກ ແລະ ເມື່ອດອກເຫັດເລີ້ມໃຫຍ່ຈຶ່ງເປີດພລາສຕິກດ້ານຂ້າງອອກ ເພື່ອຖ່າຍເທລະບາຍອາກາດອີກຄັ້ງ .

Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ເຕັກນິກ ການປູກເຫັດບົດ



ຂຽນໂດຍ : ໜ່ວຍງານວິຊາຊີບ
ໂທລະສັບ/ແຟກ: 021 740252
ສະໜັບສະໜູນໂດຍ :
ໂຄງການ ສົ່ງເສີມ ກະສິກຳ (LEAP)